

# ອຶ່ງອ່າງເງິນລ້ານ

ນາງ ສຸວັນນາ ສົມຈັນມະວົງ, ອາຍຸ 24 ປີ, ລະດັບການສຶກສາຊັ້ນສູງ, ປັດຈຸບັນຢູ່ບ້ານ ໜອງຊາຍ, ເມືອງ ຫ້ວຍຊາຍ, ແຂວງ ບໍ່ແກ້ວ. ເພາະມີຄວາມມັກຮັກ ໃນວຽກງານກະສິກໍາຈຶ່ງໄດ້ເຂົ້າຮ່ວມແຂ່ງຂັນທຸລະກິດກະສິກໍາ ທີ່ວິທະຍາໄລກະສິກໍາ ແລະ ປ່າໄມ້ພາກເໜືອ ທີ່ທາງຄູອາຈານເພີ່ນໄດ້ແນະນໍາໃຫ້.

**ທຶນທີ່ໄດ້ຮັບ:** ໄດ້ຮັບທຶນຈາກໂຄງການໃນປີ 2018 ເປັນມູນຄ່າທັງໝົດແມ່ນ 16,000,000 ກີບ (ສິບຫົກລ້ານກີບ).

**ປະເພດທຸລະກິດ:**
ລ້ຽງກົບ, ລ້ຽງອຶ່ງອ່າງ ແລະ ປູກຜັກ. ປັດຈຸບັນແມ່ນ ລ້ຽງກົບ, ລ້ຽງເປັດ, ລ້ຽງໄກ່, ປູກຜັກບົ່ວ, ຜັກບົ້ງ ແລະ ປູກສາລີ.

**ການນໍາໃຊ້ທຶນ:**
ໃນປີ 2018 ໄດ້ນໍາໃຊ້ທຶນຊື້ອຸປະກອນສ້າງໂຮງເຮືອນ, ຊື້ພໍ່ແມ່ພັນກົບ, ຊື້ຫົວອາຫານ ແລະ ຈ້າງແຮງງານໃນການກໍ່ສ້າງໂຮງເຮືອນ.

**ເປົ້າໝາຍ:**
ເປົ້າໝາຍ ໃນປີ 2020 ແມ່ນຢາກຂາຍກົບໃຫ້ໄດ້ 160 ກິໂລ/ເດືອນ.

**ບັນຫາທີ່ພົບພໍ້:**
ມີຄູ່ແຂ່ງທີ່ລ້ຽງກົບຫຼາຍຂຶ້ນ, ເກລາຄາກັນ, ຫົວອາຫານກົບສ່ວນໃຫຍ່ແມ່ນຊື້ມາຈາກປະເທດໄທ, ເຊິ່ງມີລາຄາແພງຂຶ້ນ ແຕ່ຕ້ອງໄດ້ຂາຍກົບໃນລາຄາເກົ່າຈຶ່ງເຮັດໃຫ້ກໍາໄລໃນການຂາຍກົບລຸດລົງຫຼາຍ.

**ລາຍຮັບຍັງບໍ່ໄດ້ຫັກຄ່າໃຊ້ຈ່າຍ:**

- ໃນປີ 2019 ຂາຍກົບ 720 ກິໂລ = 18,000,000 ກີບ ຂາຍໄດ້ພຽງແຕ່ 8 ເດືອນເທົ່ານັ້ນ ເພາະຊ່ວງລະດູໜາວນໍ້າໜັກກົບຈະຫຼຸດລົງເຮົາເລີຍບໍ່ເອົາກົບອອກຂາຍ ແລະ ຂາຍຜັກຕາມລະດູການແຕ່ເດືອນ ພະຈິກ-ທັນວາ ແມ່ນ 1,600,000 ກີບ. ລວມລາຍຮັບໝົດ ປີ 2019 ແມ່ນ 19,600,000 ກີບ.
- ໃນປີ 2020 ຂາຍກົບແຕ່ເດືອນ ມີນາ-ກໍລະກົດ 520 ໂຕ = 20,000,000 ກີບ (ລາຄາກົບສູງກວ່າປີ 2019) ແລະ ຂາຍຜັກຕາມລະດູການແຕ່ເດືອນ ມັງກອນ-ກໍລະກົດ 5,600,000 ກີບ. ລວມລາຍຮັບໝົດ ປີ 2020 ແມ່ນ 25,600,000 ກີບ.
- ໃນປີ 2021 ຂາຍກົບ ແຕ່ເດືອນ ພຶດສະພາ - ກັນຍາ ປະມານ 224 ກິໂລ = 5,600,000 ກີບ, ຂາຍຜັກໃຫ້ລູກຄ້າປະຈໍາ ໝົດປີ ຕົກເປັນເງິນ 71,670,000 ກີບ. ລວມລາຍຮັບໃນປີ 2021= 77,270,000 ກີບ.





